**5. ຕະຫຼາດຫຼັກຊັບແມ່ນຫຍັງ?**

ຕະຫຼາດຫຼັກຊັບ ແມ່ນສູນກາງໃຫ້ບໍລິການຊື້ຂາຍ-ຫຼັກຊັບ, ສະສາງ-ຊໍາລະ ແລະ ຮັບຝາກຫຼັກຊັບ ຂອງ ບໍລິສັດທີ່ນໍາເອົາຫຼັກຊັບຂອງຕົນເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ.

ໃນປະຈຸບັນ ຢູ່ ສປປ ລາວ ມີຕະຫຼາດຫຼັກຊັບ 1 ແຫ່ງ ຄື: ຕະຫຼາດຫຼັກຊັບລາວ (ຕລຊລ). ຕລຊລ ໄດ້ຮັບ ການສ້າງຕັ້ງຂຶ້ນໃນວັນທີ 10.10.2010 ໂດຍແມ່ນການຮ່ວມທຶນລະຫວ່າງ ທະນາຄານ ແຫ່ງ ສປປ ລາວ ຖືຮຸ້ນ 51% ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ຖືຮຸ້ນ 49%.